# ທຶນການສຶກສາລະດັບປະລິນຍາຕີ

**ສົກປີ 2019-2020**

ຄະນະກໍາມາທິການພາກພື້ນອາຊີ-ປາຊີຟິກ

## ຂໍ້ກໍານົດໃນການຂໍທຶນ

*ປະກາດເປີດຮັບຄໍາຮ້ອງຂໍທຶນແມ່ນເລີມແຕ່ວັນທີ 20 ກັນຍາ ຫາ ວັນທີ 20 ຕຸລາ 2019 ສໍາລັບນັກສຶກສາ ລາວ, ຫວຽດນາມ ແລະ ວານູອາຕູ ແລະ ສໍາລັບນັກສຶກສາກໍາປູເຈຍແມ່ນຮອດວັນທີ 09 ພະຈິກ 2019.*

## 1. ຈຸດປະສົງ

ແຈ້ງການກ່ຽວກັບທຶນການສຶກສາສະບັບນີ້ແມ່ນສໍາລັບນັກສຶກສາທີ່ໄດ້ລົງທະບຽນຮຽນລະດັບປະລິນຍາຕີສາຍຝຣັ່ງໂກໂຟນຂອງພາກວິຊາຢູ່ໃນສະຖາບັນທີ່ເປັນສະມາຊິກຂອງອົງການມະຫາວິທະຍາໄລທີ່ໃຊ້ພາສາຝຣັ່ງໃນຂົງເຂດອາຊີ-ປາຊີຟິກ (AUF) (ຫວຽດນາມ, ກໍາປູເຈຍ, ລາວ, ວານູອາຕູ). ການສະໜອງທຶນການສຶກສາແມ່ນຈະອີງໃສ່ເງື່ອນໄຂທາງດ້ານສັງຄົມເປັນຫຼັກເພື່ອຊ່ວຍເຫຼືອນັກສຶກສາທີ່ຖານະຄອບຄົວຫຍຸ້ງຍາກທາງດ້ານການເງິນເພື່ອສືບຕໍ່ຮຽນຢູ່ສາຍຝຣັ່ງໂກໂຟນ.

ລາຍຊື່ສາຂາວິຊາຮຽນທີ່ເປັນພາສາຝຣັ່ງໃນລະດັບປະລິນຍາຕີສາມາດເຂົ້າໄປເບິ່ງໄດ້ທີ່ເວບໄຊດ້ານລຸ່ມນີ້:
https://www.auf.org/asie-pacifique/nouvelles/appels-a-candidatures/appel-regional-candidatures-allocation-detudes-annee-2019-2020-formations-universitaires-francophones-de-niveau-licence

## 2. ເງື່ອນໄຂຂອງຜູ້ສະໝັກຂໍທຶນ

ທຶນການສຶກສາແມ່ນການຊ່ວຍເຫຼືອທາງດ້ານການເງິນໃຫ້ແກ່ບັນດານິສິດນັກສຶກສາທີ່ລົງທະບຽນຮຽນຢູ່ໃນສາຍຝຣັ່ງໂກໂຟນໃນປະເທດຂອງຕົນ ເຊິ່ງການຊ່ວຍເຫຼືອແມ່ນຈະອີງໃສ່ເງື່ອນໄຂສະຖານະທາງດ້ານສັງຄົມຂອງນັກຮຽນເປັນຕົ້ນຕໍ.

**ບັນດານັກສຶກສາບໍ່ວ່າຈະມາຈາກປະເທດ ລາວ, ຫວຽດນາມ, ກໍາປູເຈຍ ແລະ ວານູອາຕູ ທີ່ລົງທະບຽນຮຽນໃນສົກຮຽນ 2019-2020 ຢູ່ໃນສາຍຝຣັ່ງໂກໂຟນໃນດ້ານຕ່າງໆທີ່ຊີ້ນໍາໂດຍອົງການ AUF ສາມາດຍື່ນຂໍທຶນນີ້ໄດ້.**

ຢູ່ໃນໜັງສືສະແດງເຈດຈໍານົງຂໍທຶນຕ້ອງໄດ້ລະບຸວົງເງິນທີ່ຕ້ອງການຂໍ ແລະ ເຫດຜົນຂອງການທຶນ (ຕົວຢ່າງ : ອັດຕາຄ່າລົງທະບຽນຮຽນ). ທຶນການສຶກສາປະຈໍາປີແມ່ນຈະໄດ້ຮັບການອານຸມັດໂດຍສໍານັກງານໃຫຍ່ອົງການ AUF ປະຈໍາພາກພື້ນອາຊີ-ປາຊີຟິກ, ໂດຍອີງໃສ່ເອກະສານຮ້ອງຂໍໃນວົງເງິນຊ່ວຍເຫຼືອທີ່ກໍານົດໄວ້ມີ 2 ປະເພດດັ່ງນີ້ : ປະເພດ A ມີວົງເງິນທັງໝົດ 300 USD ແລະ ປະເພດ B ມີວົງເງິນ 150 USD.

ເພື່ອຂໍທຶນການສຶກສາ, ຜູ້ຮ້ອງຂໍຕ້ອງໄດ້ກະກຽມດັ່ງນີ້:

- ລົງທະບຽນຮຽນຢູ່ໃນສົກການສຶກ2019-2020 ຢູ່ໃນສາຍຝຣັ່ງໂກໂຟນຂອງສະຖາບັນທີ່ເປັນສະມາຊິກຂອງອົງການ AUF;
- ກະກຽມເອກະສານຕໍ່ໄປນີ້ໃຫ້ຄົບຖ້ວນເຊັ່ນ : ໃບຊີວະປະວັດຫຍໍ້, ໃບຄະແນນຈົບມໍ 6 ສໍາລັບນັກສຶກສາປີ 1, ໃບສໍາເນົາປະກາສະນີຍະບັດ, ແລະ ອື່ນໆ
- ເອກະສານຄໍາຮ້ອງຂໍທຶນຕ້ອງສົ່ງພາຍໃນໄລຍະເວລາທີ່ກໍານົດໄວ້ໃນໃບແຈ້ງການ.

## 3. ຮູບແບບການຄັດເລືອກຜູ້ໄດ້ຮັບທຶນ

**ຄໍານໍາ**

ພວກເຮົາຂໍແຈ້ງໃຫ້ບັນດາຜູ້ຮ້ອງຂໍທຶນທຸກທ່ານຊາບວ່າອົງການ AUF ບໍ່ແມ່ນສະຖາບັນຂອງລັດເຊິ່ງມີພາລະກິດເຊື່ອມໂຫວຖືກຕ້ອງຕາມລະບຽບກົດໝາຍໃນດ້ານການສຶກສາຊັ້ນສູງ ແລະ ການຄົ້ນຄ້ວາ. ດັ່ງນັ້ນການສະຫນອງການຊ່ວຍເຫຼືອທຶນການສຶກສາບໍ່ໄດ້ໝາຍເຖິງການຮັບເອົາຜູ້ທີ່ໄດ້ຮັບສິດຜົນປະໂຫຍດໂດຍອົງການ AUF ຫຼືການສ້າງຄວາມສໍາພັນໃນວຽກງານ ຫຼື ສາຍພົວພັນໃດໜຶ່ງລະຫວ່າງ AUF ກັບຜູ້ສະຫມັກທີ່ຖືກເລືອກ. ດັ່ງນັ້ນເງິນຊ່ວຍເຫຼືອດັ່ງກ່າວນີ້ບໍ່ໄດ້ກ່ຽວຂ້ອງກັບເງິນເດືອນ ຫຼື ຄ່າຕອບແທນໃນຮູບແບບໃດໆເນື່ອງຈາກວ່າມັນບໍ່ມີຜົນຕອບແທນຈາກການເຮັດວຽກງານໃດໜຶ່ງທີ່ພາຍໃຕ້ການຄຸ້ມຄອງດູແລຂອງອົງການ AUF. ການເຂົ້າຮຽນ ແລະ ການຝຶກອົບຮົມຂອງຜູ້ໄດ້ຮັບທຶນຊ່ວຍເຫຼືອຍັງຄົງຢູ່ພາຍ

ໃຕ້ກົດລະບຽບກົດໝາຍທີ່ມີຜົນບັງຄັບໃຊ້ຢູ່ໃນສະຖາບັນການສຶກສາຂອງຕົນທີ່ຮຽນຢູ່ໃນປະຈຸບັນ. ນອກຈາກນີ້, AUF ຈະບໍ່ມີການໃຊ້ອຳນາດທາງວິໄນ ແລະ / ຫຼື ການຄວບຄຸມໃດໆຕໍ່ຜູ້ໄດ້ຮັບທຶນການສຶກສາ.

ຜູ້ສະໝັກຂໍທຶນການສຶກສາຈາກ AUF ຈະໄດ້ຮັບການສະໜັບສະໜູນຢ່າງເຕັມທີ່ໃນການຊອກຫາການປະກອບສ່ວນອື່ນໆເພື່ອມາຊ່ວຍຕອບສະໜອງຄວາມຕ້ອງການທັງໝົດທີ່ພົບໃນໄລຍະການຮຽນຂອງລາວ, ໂດຍສະເພາະທີ່ສະຖາບັນການສຶກສາທີ່ລາວຮຽນຢູ່.

***ຂັ້ນຕອນຕ່າງໆໃນການຂໍທຶນ***

ຜູ້ສະໝັກຂໍທຶນຕ້ອງຕື່ມແບບຟອມທີ່ກ່ຽວຂ້ອງຜ່ານທາງອິນເຕີເນັດເທົ່ານັ້ນຜ່ານທາງເວັບໄຊຕໍ່ໄປນີ້ : (https://formulaires.auf.org/) ພາຍໃນໄລຍະເວລາທີ່ກຳນົດໃຫ້. ຜູ້ສະໝັກຂໍທຶນທຸກໆຄົນມີສິດຍື່ນຄຳຮ້ອງຂໍທຶນໄດ້ແຕ່ເທື່ອດຽວໝາຍຄວາມວ່າບໍ່ໃຫ້ສົ່ງຫຼາຍເທື່ອ.

ພາຍຫຼັງທີ່ໄດ້ຮັບການກວດສອບເອກະສານຂອງເຂົາເຈົ້າແລ້ວ, ເອກະສານທັງໝົດຈະໄດ້ຖືກນຳສົ່ງໄປໃຫ້ຄະນະກຳມາທິການຊ່ຽວຊານຂອງ AUF ປະຈຳພາກພື້ນອາຊີປາ-ຊີຟິກ. ບັນດາເອກະສານຄຳຮ້ອງຂອງຜູ້ຍື່ນຂໍທຶນແມ່ນຈະຖືກພິຈາລະນາຮັບຮອງເອົາໂດຍອີງໃສ່ເງື່ອນໄຂທາງດ້ານສັງຄົມ ແລະ ຈະຖືກສົ່ງເຂົ້າໄປຂໍຄຳຄິດເຫັນນຳຜູ້ຮັບຜິດຊອບການສິດສອນພາສາຝຣັ່ງຢູ່ບ່ອນທີ່ຜູ້ກ່ຽວລົງທະບຽນຮຽນ ແລະ ອີງໃສ່ຂອບເຂດວົງເງິນທີ່ມີຢູ່ຕົວຈິງ. ເອກະສານທຸກຢ່າງຈະບໍ່ໄດ້ສົ່ງກັບຄືນໃຫ້ຜູ້ຍື່ນຄຳຮ້ອງຂໍທຶນ.

**ບັນດາເງື່ອນໄຂຕ່າງໆທີ່ຈະໃຊ້ເປັນເກນໃນການຄັດເລືອກມີດັ່ງນີ້:**

- ສະຖານະສ່ວນຕົວ ແລະ ຂອງຄອບຄົວຜູ້ຮ້ອງຂໍທຶນ;
- ຄວາມຫ່າງໄກລະຫວ່າງທີ່ພັກອາໄສ ແລະ ສະຖານທີ່ຮໍ່າຮຽນ
- ໃນກໍລະນີເອກະສານມີເງື່ອນໄຂເທົ່າທຽມກັນ, ຜູ້ຮ້ອງຂໍທີ່ເປັນເພດຍິງ ແລະ / ຫຼື ຜູ້ທີ່ມີຄະແນນດີແມ່ນຈະໄດ້ຮັບສິດທິພິເສດ;
- ຄຳຄິດເຫັນຂອງຜູ້ຮັບຜິດຊອບການຮຽນການສອນພາສາຝຣັ່ງ.

## 4. ເງື່ອນໄຂຂອງການຊ່ວຍເຫຼືອ

ທຶນການສຶກສາແມ່ນຈະອານຸມັດໃຫ້ສຳລັບ 1 ສົກຮຽນ. ຜູ້ຂໍທຶນຈະຕ້ອງໄດ້ຍື່ນຄຳຮ້ອງຂໍທຶນອີກທຸກໆປີສຳລັບສົກຮຽນໃໝ່.

## 5. ຮູບແບບຂອງການໃຫ້ເງິນຊ່ວຍເຫຼືອ

ເງິນທຶນການສຶກສາຈະຖືກແບ່ງຈ່າຍເປັນ 2 ງວດສຳລັບນັກສຶກສາທີ່ຮຽນຢູ່ສາຍຝຣັ່ງໂກໂຟນ (ໃນຕອນທ້າຍຂອງທຸກໆພາກຮຽນ). ທຶນການສຶກສາໝົດປີຈະຖືກອານຸມັດໃຫ້ນັກສຶກສາໂດຍອີງໃສ່ໂດຍເອກະສານຮ້ອງຂໍໃນວົງເງິນຊ່ວຍເຫຼືອທີ່ກຳນົດໄວ້ມີ 2 ປະເພດດັ່ງນີ້ : ປະເພດ A ມີວົງເງິນທັງໝົດ 300 USD ແລະ ປະເພດ B ມີວົງເງິນ 150 USD.

ຖ້າຫາກວ່າສະຖາບັນການສຶກສາທີ່ຜູ້ຂໍທຶນຮຽນຢູ່ແຈ້ງມາທາງອົງການ AUF ໃຫ້ຢຸດເຊົາໃຫ້ທຶນກ່ອນກຳນົດ, ຫຼື ຖ້າວ່າເງື່ອນໄຂຂອງຜູ້ໄດ້ຮັບທຶນບໍ່ສາມາດບໍ່ຖືກກັບຂໍ້ກຳນົດຂອງການໃຫ້ທຶນຊ່ວຍເຫຼືອແລ້ວທາງອົງການ AUFມີສິດຈະລະງັບ ຫຼື ຍົກເລີກການຈ່າຍເງິນທຶນຊ່ວຍເຫຼືອດັ່ງກ່າວໃນງວດຖັດໄປ.

## 6. ຂໍ້ບັງຄັບຂອງສະຖາບັນ

ສະຖາບັນການທີ່ນັກສຶກສາທີ່ໄດ້ທຶນຮຽນຢູ່ຕ້ອງໄດ້ປະຕິບັດດັ່ງນີ້ :

- ຕ້ອງກວດສອບໃຫ້ແນ່ໃຈວ່າຜູ້ທີ່ໄດ້ຮັບທຶນຊ່ວຍເຫຼືອໄດ້ປະຕິບັດຕາມຂໍ້ກຳນົດສະບັບນີ້ຢ່າງຖືກຕ້ອງ ;
- ຕ້ອງແຈ້ງໃຫ້ທາງອົງການ AUF ຮັບຊາບຢ່າງຮີບດ່ວນໃນກໍລະນີມີການຢຸດເຊົາການຮຽນຂອງຜູ້ທີ່ໄດ້ຮັບທຶນດັ່ງກ່າວ ;
- ຕ້ອງຮັບປະກັນວ່າຜູ້ທີ່ໄດ້ຮັບທຶນໄດ້ມີການປະຕິບັດຂໍ້ກຳນົດກົດລະບຽບທີ່ຖືກບັງຄັບໃຊ້ໃນສະຖາບັນການສຶກສາຢ່າງເຄັ່ງຂັດ.

## 7. ໄລຍະເວລາເປີດ-ປິດການຍື່ນຄຳຮ້ອງຂໍທຶນ

- 15 ກັນຍາ 2019 : ເລີ່ມປະກາດການເປີດຮັບຄຳຮ້ອງຂໍທຶນ
- 20 ຕຸລາ 2019 : ປິດຮັບຄຳຮ້ອງຂໍທຶນ
- ເດືອນພະຈິກ 2018 : ປະກາດຜົນຂອງຜູ້ທີ່ຈະໄດ້ຮັບທຶນ (ລາຍຊື່ຢູ່ໃນບັນຊີສຸດທ້າຍ).

## 8. ເອກະສານທີ່ຜູ້ຍື່ນຂໍທຶນຕ້ອງປະກອບໃຫ້ຄົບຖ້ວນ

ເອກະສານຍື່ນຂໍທຶນຕ້ອງໄດ້ຕື່ມຜ່ານທາງອອນລາຍເທົ່ານັ້ນໂດຍຜ່ານທາງເວບໄຊນີ້ : (https://formulaires.auf.org/) ພາຍໃນໄລຍະເວລາທີ່ກຳນົດໃຫ້.

**ເພື່ອໃຫ້ເອກະສານສົມບູນ ແລະ ຖືກຮັບຮອງ, ເອກະສານຕ້ອງປະກອບດ້ວຍໜັງສືຕ່າງໆຕໍ່ໄປນີ້ (ໂດຍການແນບຕິດຂັດຟາຍເອກະສານໃນເວລາຂຽນແບບຟອມອອນລາຍ) :**

1. ໃບຊີວະປະຫວັດຫຍໍ້ທີ່ອັບເດດຂໍ້ມູນຫລ່າສຸດຕິດຮູບພ້ອມຂຽນເປັນພາສາຝຣັ່ງ.
2. ກອບປີສຳເນົາຫຼັກຖານການເປັນນັກຮຽນຢູ່ມະຫາວິທະຍາໄລ (ສຳລັບນັກສຶກສາແຕ່ປີ 2 ຂື້ນໄປ ຫຼື ສູງກວ່າ)
3. ກອບປີໃບຄະແນນເສັງເຂົ້າມະຫາວິທະຍາໄລ (ສຳລັບນັກສຶກສາຫວຽດນາມ ປີທີ 1) ແລະ **ໃບຂະແນນເສັງຈົບມັດທະຍົມປາຍ ມໍ 7 ສຳລັບນັກສຶກສາລາວ** ແລະ ກຳປູເຈຍ ປີທີ 1
4. ໃບຢັ້ງຢືນສະຖານະທາງຄອບຄົວອອກໃຫ້ໂດຍອຳນາດການປົກຄອງບ້ານທີ່ທາງຄອບຄົວຂອງຜູ້ກ່ຽວອາໄສຢູ່ໃນປະຈຸບັນໃຫ້ (ແປເປັນພາສາຝຣັ່ງພ້ອມ).

**ເອກະສານທີ່ໃຊ້ປະກອບຄຳຮ້ອງຂໍທຶນທັງໝົດຕ້ອງຂຽນເປັນພາສາທ້ອງຖິ່ນ (ພາສາລາວ) ສຳລັບນັກສຶກສາປີທີ 1 ແລະ ສຳລັບນັກສຶກສາແຕ່ປີ 2 ຂື້ນໄປ ຫຼື ສູງກວ່ານັ້ນໃຫ້ຂຽນເປັນພາສາຝຣັ່ງເທົ່ານັ້ນ.**
**ຖ້າຫາກເອກະສານບໍ່ຄົບຂາດຢ່າງໃດຢ່າງໜຶ່ງແມ່ນຖືວ່າຖືກຕັດສິດໂດຍອັດຕະໂນມັດ.**

ເອກະສານທຸກຢ່າງບໍ່ວ່າຈະເປັນສຳເນົາຕິດຂັດຈະບໍ່ຮັບເພີ່ມອີກພາຍຫຼັງທີ່ເອກະສານຄຳຮ້ອງສະບັບປະຈຸບັນໄດ້ຜ່ານການພິຈາລະນາແລ້ວເຖິງວ່າປະກາດຮັບຄຳຮ້ອງຍັງບໍ່ທັນໝົດກຳນົດກໍ່ຕາມ. ເອກະສານທຸກຢ່າງຂອງຜູ້ຍື່ນຂໍທຶນທີ່ສົ່ງມາທາງໄປສະນີ ຫຼື ສົ່ງຜ່ານທາງແຟກຈະບໍ່ຮັບພິຈາລະນາເປັນອັນຂາດ. ຜູ້ຍື່ນສະໝັກຂໍທຶນສາມາດຍື່ນເອກະສານຄຳຮ້ອງໄດ້ແຕ່ 1 ຊຸດເທົ່ານັ້ນ.

## ຂໍ້ມູນເພີ່ມເຕີມ : ຕິດຕໍ່ພົວພັນກັບ ຫ້ອງການ AUF ປະຈຳພາກພື້ນອາຊີ-ປາຊີຟິກ ແລະ ຫ້ອງການສາຂາ

### ຄະນະກຳມາທິການພາກພື້ນອາຊີ-ປາຊີຟິກປະຈຳນະຄອນຫຼວງຫ່າໂນຍ

*ທ່ານ ນາງ DINH Thi Hai Yen, - ຜູ້ຮັບຜິດຊອບວຽກງານໂຄງການ*
*ອີເມລ: dinh.hai.yen@auf.org*
*ໂທລ : +84 24 38 24 73 82 (ext. 23)*

### ຫ້ອງການສາຂາປະຈຳນະຄອນໂຮ່ຈິມິນ – ສ.ສ ຫວຽດນາມ

*ທ່ານ NGUYEN Tan Dai, ຫົວໜ້າສູນ CNF*
*ອີເມລ: nguyen.tan.dai@auf.org*
*ໂທລ : + 84 28 38 27 95 50 (ext. 104)*

### ຫ້ອງການສາຂາປະຈຳນະຄອນຫຼວງພະນົມເປັນ - ປະເທດກຳປູເຈຍ

*ທ່ານ IM Kravong, ຫົວໜ້າຫ້ອງການສາຂາອົງການ AUF ປະຈຳປະເທດກຳປູເຈຍ*
*ອີເມລ: kravong.im@auf.org*
*ໂທລ : (+855) 23 883 135/136 (Ext. 12)*

### ຫ້ອງການສາຂາປະຈຳນະຄອນຫຼວງວຽງຈັນ

*ທ່ານ ວັນນະພາ ບຸບຜາປັນຍາ - ຜູ້ຮັບຜິດຊອບວຽກງານໂຄງການ*
*ອີເມລ: vannapha.bouphapanya@auf.org*
*ໂທລ + 856 77 18 00 ຕໍ່ 105 | + 856 20 28 035 193 - 77 713 130*